ເພື່ອນມິດ
peuan mit
friends
international





### ອົງການ ເຟັຣນອິນເຕີເນເຊິນເນວ໌ ປະຈຳ ລາວ

# ຕ້ອງການຮັບສະໝັກງານ ປະຈຳແຂວງ ຫຼວງພະບາງ

ທ່ານມີຄວາມສົນໃຈເຮັດວຽກໃນໂຄງການຊ່ວຍເຫຼືອເດັກຂ້າງຖະໜົນບໍ່? ມັກໃຫ້ການຊ່ວຍເຫຼືອເດັກ ແລະ ໄວໜຸ່ມທີ່ດ້ອຍໂອກາດຫຼືບໍ່? ຖ້າທ່ານມັກ ແລະ ສົນໃຈ ມາຮ່ວມກັບທີມງານຂອງພວກເຮົາ!

**ອົງການ ເຟັຣນອິນເຕີເນເຊິນເນວ໌** ສ້າງຕັ້ງຂຶ້ນໃນປີ 1994 ຢູ່ພະນົມເປັນ ແລະ ມີສຳນັກງານຢູ່ລາວ ຕັ້ງແຕ່ປີ 2004. ວິໄສທັດຂອງພວກເຮົາແມ່ນ ເດັກທຸກຄົນ, ໄວໜຸ່ມ, ແລະຜູ້ປົກຄອງ ຂອງເຂົາເຈົ້າປອດໄພຈາກໄພອັນຕະລາຍສາມາດເຂົ້າເຖິງການສຶກສາ, ການຝຶກອົບຮົມ ແລະ ມີວຽກເຮັດງານທຳ ເພື່ອກາຍມາເປັນພົນເມືອງທີ່ມີປະສິດຕິພາບ. ເຮົາມີທີມງານຢູ່ ກຳປູເຈຍ, ໄທ, ລາວ, ອິນໂດເນເຊຍ, ມຽນມາ ແລະ ເອີຣົບ ໃຫ້ບໍລິການນະວັດຕະກຳທີ່ເນັ້ນໃສ່ການປົກປ້ອງເດັກ, ວຽກງານສັງຄົມ, ການສຶກສາ, ການຝຶກອົບຮົມວິຊາຊີບ ແລະ ທັກສະທີ່ຈຳເປັນອື່ນໆ!

## ໜ້າວຽກຫຼັກ ແລະ ເງື່ອນໄຂ

## <u>ຕຳແໜ່ງ ນັກສັງຄົມສົງເຄາະ 01 ຕຳແໜ່ງ</u>

- ມີໃບປະກາດສະນີຍາບັດຈາກພາກວິຊາ ວິທິຍາສາດສັງຄົມ ສາຂາສັງຄົມສົງເຄາະ
- ສາມາດນຳພາເດັກ, ໄວໜຸ່ມ ເຮັດກິດຈະກຳທີ່ມ່ວນຊື່ນ, ເກມ, ກິລາ ແລະ ອື່ນໆ
- ໃຫ້ການຊ່ວຍເຫຼືອ/ຕິດຕາມ ເດັກ ແລະ ຄອບຄົວດ້ອຍໂອກາດໃຫ້ໄດ້ຮັບການສຶກສາ ແລະ ສືບຕໍ່ຮໍ່າຮຽນ
- ປະສານງານກັບອຳນາດການປົກຄອງທ້ອງຖິ່ນ ແລະ ໂຮງຮຽນ ເພື່ອໃຫ້ແນ່ໃຈວ່າເດັກສາມາດເຂົ້າເຖິງສິດຜົນປະໂຫຍດຂັ້ນພື້ນຖານ
- ມີຄວາມຮູ້ ແລະ ປະສົບການ ເຮັດວຽກກັບເດັກ/ຄອບຄົວ, ວຽກງານສັງຄົມສົງເຄາະ
- ມີມະນຸດສຳພັນດີ, ມີຄວາມຫ້າວຫັນ ແລະ ມີຄວາມຄິດສ້າງສັນ
- ສາມາດ ສື່ສານເປັນ ພາສາຂະມຸ, ພາສາມົ້ງ ໄດ້ຍິ່ງເປັນການດີ

**<u>ເຂົ້າຮ່ວມກັບພວກເຮົາໂດຍ</u>**: ສົ່ງຈົດໝາຍສະໝັກງານ ແລະ ຊີວະປະຫວັດ ເຖິງ:

- ➢ ບ້ານທາດໂບສົດ, ນະຄອນຫຼວງພະບາງ, ແຂວງຫຼວງພະບາງ (ໃຫ້ກັບຫ້ອງການບ້ານທາດໂບສົດ)
- ➢ **ເບີໂທ / ວ໋ອດແອັບ 020 29930974 ຫຼື 020 55999817**
- ➢ ຫຼື ສົ່ງມາທີ່ອີເມວ hr.laos@friends-international.org

ຜູ້ທີ່ຖືກເລືອກແມ່ນຈະຕ້ອງໄດ້ປະຕິບັດຕາມນະໂຍບາຍການປົກປ້ອງເດັກ ແລະ ກົດລະບຽບປົກປ້ອງເພື່ອຕ້ານ ແລະ ສະກັດກັ້ນການສະແຫວງຫາຜົນປະໂຫຍດ ແລະ ການລ່ວງລະເມີດທາງເພດ.

*Friends team*